# ຜູ້ໃຫຍ່ທີ່ມີຄວາມເສັຽອົງຄະດ້ານການທຳງານຂອງຮ່າງກາຍຜູ້ທີ່ອາສັຍຢູ່ໂດຍຕົນເອງ ສາມາດຊີ້ນຳໄດ້ໂດຍຕົນເອງໃນພາລະໜ້າທີ່ກ່ຽວຂ້ອງກັບສຸຂະພາບຂອງເຂົາເຈົ້າ.



## ການເບິ່ງແຍງທີ່ຖືກຊີ້ນຳໂດຍຕົນເອງແມ່ນຫຍັງ?

ພວກເຮົາເຮັດພາລະຫນ້າທີ່ກ່ຽວກັບການຖະນອມສຸຂະພາບຫລາຍໆຢ່າງທີ່ຖືກສັ່ງໂດຍຜູ້ຊ່ຽວຊານການປິ່ນປົວສຸຂະພາບສຳລັບພວກເຮົາເອງ. ພວກເຮົາເປີດກ່ອງຢາທີ່ຖືກສັ່ງຊື້ໂດຍທ່ານຫມໍ ແລະ ໃຊ້ຕາມທີ່ຖືກສັ່ງ. ບາງເທື່ອພວກເຮົາມີບັນຫາສຸຂະພາບທີ່ເປັນມາແຕ່ດົນນານແລ້ວ, ເຊັ່ນວ່າພະຍາດເບົາຫວານ, ແລະພວກເຮົາກຳກັບນຳລະດັບຂອງນ້ຳຕານຢູ່ໃນເລືອດຂອງພວກເຮົາ. ພາລະຫນ້າທີ່ກ່ຽວກັບການຖນອມສຸຂະພາບຢ່າງອື່ນໆອາດຈະລວມເອົາໂຄງການຖ່າຍຫນັກພິເສດ, ການແຍ່ທໍ່ເຂົ້າໃສ່ພົກຍ່ຽວ, ຫລື ການ ປິ່ນປົວບາດແຜ.

ເຖິງຢ່າງໃດກໍຕາມ, ຈະເຮັດແນວໃດຖ້າຫາກວ່າຄວາມເສັຽອົງຄະດ້ານການທຳງານຫລີກເວັ້ນຜູ້ໃຫຍ່ຈາກການປະຕິບັດໜ້າທີ່ຖນອມສຸຂະພາບດ້ວຍຮ່າງກາຍຊຶ່ງວ່າເຂົາເຈົ້າຈະເຮັດໄດ້ຕາມປົກະຕິ? ຜູ້ໃຫຍ່ຜູ້ທີ່ມີຄວາມເສັຽອົງຄະດຽວນີ້ສາມາດເລືອກເອົາທີ່ຈະຊີ້ນຳ ແລະຄວບຄຸມຜູ້ຊ່ວຍສ່ວນຕົວທີ່ຖືກຈ່າຍເງິນໃຫ້ ຫລື ຜູ້ໃຫ້ການເບິ່ງແຍງສ່ວນຕົວ (IP) ທີ່ຈະປະຕິບັດໜ້າທີ່ເຫລົ່ານັ້ນ. (ຜູ້ຊ່ວຍທີ່ຖືກຈ່າຍເງິນໃຫ້ໂດຍຫ້ອງການເບິ່ງແຍງຢູ່ເຮືອນບໍ່ສາມາດ ທີ່ຈະປະຕິບັດໜ້າທີ່ເຫລົ່ານັ້ນ.) ໃນປີ 1999 ກົດໝາຍ (HB 1880, State of Washington) ໄດ້ຜ່ານອອກມາຊຶ່ງໄດ້ກໍ່ຕັ້ງສິດທິຂອງການເບິ່ງແຍງທີ່ຖືກຊີ້ນຳໂດຍຕົນເອງ.

ຖ້າຫາກວ່າທ່ານມີຄວາມເສັຽອົງຄະ, ອາສັຍຢູ່ໃນເຮືອນ, ອາຍຸ 18 ປີ ຫລື ແກ່ກວ່າ, ແລະ ຕ້ອງການທີ່ຈະຊີ້ນຳການເບິ່ງແຍງສຸຂະພາບຂອງທ່ານເອງໂດຍທ່ານເອງ, ທ່ານຕ້ອງໄດ້ຮັບຜິດຊອບສຳລັບສິ່ງຕໍ່ໄປນີ້:

- ທ່ານຕ້ອງບອກຜູ້ຊ່ຽວຊານດ້ານການປິ່ນປົວສຸຂະພາບຜູ້ທີ່ໄດ້ສັ່ງການປິ່ນປົວ ວ່າທ່ານຕ້ອງການທີ່ຈະຊີ້ນຳຜູ້ຊ່ວຍສ່ວນຕົວທີ່ຈະປະຕິບັດພາລະໜ້າທີ່.
- ທ່ານຕ້ອງມີຄວາມຮູ້ ແລະ ຄວາມສາມາດພຽງພໍທີ່ຈະຝຶກແອບຄົນໃດຄົນນຶ່ງທີ່ຈະ ປະຕິບັດພາລະໜ້າທີ່.
- ທ່ານຕ້ອງໄດ້ຝຶກແອບຜູ້ຊ່ວຍເບິ່ງແຍງສ່ວນຕົວ (ຜູ້ບໍຣິການສ່ວນບຸກຄົນ) ທີ່ຈະປະຕິບັດພາລະໜ້າທີ່.
- ທ່ານຕ້ອງຄວບຄຸມການປະຕິບັດງານຂອງ ຜູ້ ຊ່ວຍສ່ວນຕົວ ຫລື IP.

## ຖ້າຫາກວ່າທ່ານຮັບເອົາເງິນທຶນຂອງຣັດ:

- ໃຫ້ແນ່ໃຈວ່າ IP ໄດ້ຮັບໂກປີໃບນຶ່ງຂອງແຜນການປິ່ນປົວຂອງທ່ານ.
- ເອົາຊື່ຂອງ IP ໃຫ້ຜູ້ກຳກັບເອກສານ ຫລື ພະນັກງານສັງຄົມຂອງທ່ານ. ຜູ້ກຳກັບເອກສານ ຫລື ພະນັກງານສັງຄົມຈະອະນຸຍາດໃຫ້ Consumer Direct of Washington (CDWA) ຜູ້ຈ້າງເອົາ IP ຂອງທ່ານ.ຕິດຕໍ່ຫາ CDWA ເພື່ອຈະບອກໃຫ້ເຂົາເຈົ້າຮູ້ຈັກວ່າທ່ານຊີ້ນຳໂດຍຕົນເອງໃຫ້ IP ຂອງທ່ານ. CDWA ຈະກວດເບິ່ງເບື້ອງຫລັງຂອງປະວັດການເຮັດຜິດກົດໝາຍອາດຍາໃສ່ IPs. CDWA ຈະບໍ່ຈ່າຍເງິນໃຫ້ IPs ຜູ້ທີ່ມີປະວັດອາດສະຍະກັມ. DSHS ເກັບຮັກສາທະບຽນຂອງຜູ້ຊ່ວຍສ່ວນຕົວຜູ້ທີ່ໄດ້ຖືກພົບວ່າໄດ້ຂົ່ມເຫັງ, ປ່ອຍປະລະເລີຍ ຫລື ຫວັງຜົນປະໂຍດສ່ວນຕົວໃສ່ຄົນອື່ນ.

# ຄຳຖາມ?

ເພື່ອຮາຍຮະອຽດເພີ້ມເຕີມ
ໃຫ້ຕິດຕໍ່ໄປຫາຜະແນກອູ້ມ
ຊູຜູ້ເຖົ້າແລະການອູ້ມຊູ
ຣະຍະຍາວໄດ້ທີ່ເລກ

**206-348-2698**

**TRS: 711** ຫລື

**1-800-974-1598**


Washington State
Department of Social & Health Services

*Transforming lives*



DSHS 22-388 LA (Rev. 12/23) Laotian



Washington State Department of Social and Health Services
ເປັນນາຍຈ້າງທີ່ໃຫ້ໂອກາດເທົ່າທຽມກັນ ແລະ ບໍ່ ແບ່ງແຍກຊົນຊັ້ນວັນນະໃສ່ອີງຕາມອາຍຸ, ເພດ, ຄວາມອຸ່ນອ່ຽງທາງເພດ, ຄວາມເປັນເພດ, ເອກະລັກ/ການສະແດງອອກມາທາງເພດ, ສະພາບແຕ່ງງານ, ຜິວພັນ, ຫລັກຄວາມເຊື່ອຖື, ສີສັນ, ເຊື້ອຊາດດັ້ງເດີມ, ສາສະນາ ຫລື ຄວາມເຊື່ອຖື, ການຜູກພັນທາງການເມືອງ, ສະພາບທະຫານ, ນັກຣົບເກົ່າຖືກປົດຫນ້າທີ່ຢ່າງມີກຽດ, ສະພາບນັກຣົບເກົ່າສະມັຍວຽດນາມ, ຖືກແຍກອອກໃນຫນໍ່ໆນີ້ ຫລື ຖືກປົກປ້ອງ, ການປາກົດມີຄວາມເສັຽອົງຄະທາງຄວາມຮູ້ສຶກ, ຈິດໃຈ, ຮ່າງກາຍຕ່າງໆ ຫລື ການໃຊ້ຫມານຳທາງ ຫລື ສັດບໍຣິການທີ່ຖືກຝຶກຝົນມາໂດຍບຸກຄົນຜູ້ທີ່ມີຄວາມເສັຽອົງຄະ, ການຈ່າຍເງິນເທົ່າທຽມກັນ ຫລື ຮາຍຮະອຽດກ່ຽວກັບກັມມະພັນ.



PRESORTED
STD.
U.S. POSTAGE PAID
Olympia,
Washington
Permit No. 297



**Washington State Department of Social and Health Services**
**Aging and Long-Term Support Administration**
P.O. Box 45600
Olympia, WA 98504-5600


# ການເບິ່ງແຍງ ທີ່ຖືກຊີ້ນຳໂດຍຕົນເອງ

**ກົດຫມາຍສິດທິພົລເມືອງອັນນີ້ຢູ່ໃນຣັດວໍຊິງຕັນສະທ້ອນເຖິງທ່ານໄດ້ແນວໃດ**



Aging and Long-Term Support Administration

Washington State Department of Social and Health Services